<u>ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>

(ປະຈຳ 6 ເດືອນ ທ້າຍປີ 2016)

## 1. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ</u>

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດປະຈຳ 6 ເດືອນຕົ້ນປີ 2016 ທຽບກັບ 6 ເດືອນທ້າຍປີ 2016 ທີ່ຜ່ານມາແມ່ນມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ** ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 11,85%, ແລະ S&P500 8,44% ແລະ ດັດຊະນີ NASDAQ 12,95%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ຜູ້ລົງທຶນຕ່າງພາກັນປະເມີນຜົນປະໂຫຍດຂອງບາງກຸ່ມທຸລະກິດທີ່ອາດຈະໄດ້ຮັບຜົນປະໂຫຍດຈາກການທີ່ ທ່ານ ໂດນັ້ນທຳ ໄດ້ຮັບການເລືອກຕັ້ງ ເປັນປະທານາທິບໍດີ ສ.ອາເມລິກາ ຄົນໃໝ່ ໂດຍສະເພາະຄວາມເຊື່ອຜູ້ລົງທຶນທີ່ມີຄວາມເຊື່ອໝັ້ນຕໍ່ກັບນະໂຍບາຍ Trumponomics ຂອງ ທ່ານ ໂດນັ້ນທຳ ວ່າຈະສົ່ງເສີມການລົງທຶນພາຍໃນປະເທດ ຈາກການຫຼຸດອາກອນລາຍໄດ້ ແລະ ຫຼຸດເງື່ອນໄຂຄວາມຫຍຸ້ງຍາກໃຫ້ກັບພາກທະນາຄານ ປະກອບກັບ ກະຊວງແຮງງານ ສ.ອາເມລິກາ ໄດ້ອອກລາຍງານ ຕົວເລກການຈ້າງງານນອກພາກກະສິກຳທີ່ເພີ່ມຂຶ້ນ 178.000 ຕຳແໜ່ງໃນເດືອນພະຈິກ ແລະ ອັດຕາການວ່າງງານກໍ່ປັບຕົວຫຼຸດລົງມາຢູ່ທີ່ລະດັບ 4,6% ເຊິ່ງເປັນລະດັບຕໍ່າສຸດນັບຕັ້ງແຕ່ເດືອນ ສິງຫາ ປີ 2007 ຫຼື ຕໍ່າສຸດໃນຮອບ 9 ປີ ໂດຍກະຊວງແຮງງານ ສ.ອາເມລິກາ ຍັງແຈ້ງຕົວເລກເພີ່ມເຕີມວ່າ ພາກເອກະຊົນມີການຈ້າງງານເພີ່ມຂຶ້ນອີກ 156.000 ຕຳແໜ່ງ ແລະ ພາກລັດກໍ່ເພີ່ມຂຶ້ນອີກ 22.000 ຕຳແໜ່ງ ໂດຍການອອກລາຍງານດັ່ງກ່າວຂອງກະຊວງແຮງງານ ແມ່ນສອດຄ່ອງກັບການກ່າວປາໄສຂອງທ່ານ ເຈເນັດ ເຢເລັນ ຜູ້ວ່າການ ທະນາຄານກາງ ສ.ອາເມລິກາ ຫຼື FED ທີ່ລະບຸວ່າ ປະຈຸບັນ ພາກແຮງງານ ແລະ ການຈ້າງງານພາຍໃນປະເທດ ແມ່ນມີຄວາມເຂັ້ມແຂງທີ່ສຸດໃນຮອບເກືອບ 10 ປີ ໃນຂະນະທີ່ ສະມາຄົມຜູ້ສ້າງເຮືອນ ຫຼື NAHB ຂອງ ສ.ອາເມລິກາ ກໍ່ໄດ້ລາຍງານວ່າ ດັດຊະນີຄວາມເຊື່ອໝັ້ນຂອງຜູ້ສ້າງເຮືອນ ປັບຕົວເພີ່ມຂຶ້ນ 7 ຈຸດ ມາຢູ່ທີ່ 70 ຈຸດໃນເດືອນ ທັນວາ ເຊິ່ງເປັນລະດັບສູງສຸດນັບຕັ້ງແຕ່ເດືອນ ກໍລະກົດ ປີ 2005 ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສົ່ງຜົນໃຫ້ ດັດຊະນີຕະຫຼາດຫຼັກຊັບ ສ.ອາເມລິກາ 6 ເດືອນທ້າຍປີ ປັບຕົວເພີ່ມຂຶ້ນຢ່າງຄຶກຄັກເມື່ອທຽບກັບ 6 ເດືອນຕົ້ນປີທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ** ດັດຊະນີ ເອີຣົບ (Eurofirst 300) ປັບຕົວເພີ່ມຂຶ້ນ 6,76%, ຝຣັ່ງ (CAC40) 10,68%, ເຢຍລະມັນ (DAX) 14,51%, ລຸກຊໍາບວກ (LUXXX) 15,32% ແລະ ອັງກິດ (FTSE100) 13,09%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວເພີ່ມຂຶ້ນ ແມ່ນເນື່ອງຈາກ ການປັບຕົວຫຼຸດລົງຂອງຄ່າເງິນປອນທຽບກັບໂດລາ ສ.ອາເມລິກາທີ່ປັບຕົວຕໍ່າສຸດໃນຮອບ 31 ປີ ທີ່ 1,272 ເຊິ່ງສົ່ງຜົນໃຫ້ ດັດຊະນີ ຕະຫຼາດຫຼັກຊັບອັງກິດ ປັບຕົວຂຶ້ນສູງສຸດໃນຮອບກວ່າ 17 ເດືອນ ແລະ ຈາກການຄາດການວ່າທຸລະກິດສົ່ງອອກຈະໄດ້ຮັບຈາກການປັບຕົວຫຼຸດລົງຂອງຄ່າເງິນດັ່ງກ່າວ. ນອກນີ້ ຜູ້ລົງທຶນຍັງເລີ່ມຫຼຸດຜ່ອນຄວາມກັງວົນຕໍ່ສະຖານະການ ແລະ ວິກິດການຕ່າງໆຂອງທະນາຄານ ດອຍ (Deutsche Bank AG) ໂດຍຜູ້ລົງທຶນຍັງຄົງມີຄວາມເຊື່ອວ່າ ທະນາຄານດັ່ງກ່າວ ຈະສາມາດຜ່ານບັນຫາທັງທາງດ້ານການດຳເນີນທຸລະກິດ ແລະ ບັນຫາການປັບໄໝຈາກກະຊວງຍຸດຕິທຳ ສ.ອາເມລິກາ ໄດ້ ລວມທັງ ຜູ້ລົງທຶນຫຼຸດຜ່ອນຄວາມກັງວົນຕໍ່ກັບສະຖານະການ ການເມືອງພາຍໃນປະເທດ ອິຕາລີ ທີ່ຈະບໍ່ສົ່ງຜົນກະທົບອັນໃດຕໍ່ກັບເອີຣົບໃນເວລານີ້ເຊັ່ນດຽວກັບບັນຫາ Brexit ຂອງປະເທດອັງກິດ ແລະ ລາຍງານລ່າສຸດຂອງດັດຊະນີຜູ້ຈັດການຊື້ເອີຣົບ ຫຼື PMI ພາກການຜະລິດແລະບໍລິການກໍ່ປັບຕົວເພີ່ມຂຶ້ນມາຢູ່ທີ່ລະດັບ 53,9 ໃນເດືອນ ພະຈິກ ຈາກ 53,3 ໃນເດືອນ ຕຸລາ

ປະກອບກັບ ກອງປະຊຸມຂອງທະນາຄານກາງ ເອີຣົບ ຫຼື ECB ແມ່ນມີມະຕິ ຂະຫຍາຍເວລາໃນການຊື້ພັນທະບັດຕາມນະໂຍບາຍຜ່ອນຄາຍທາງປະລິມານ ຫຼື QE ຄວບຄູ່ກັບການດຳເນີນແຜນການໃນການສືບຕໍ່ອັດຕາດອກເບ້ຍເງິນກູ້ທີ່ລະດັບ 0,25% ເພື່ອໃຊ້ເປັນເຄື່ອງມື ແລະ ນະໂຍບາຍກະຕຸ້ນເສດຖະກິດຕໍ່ໄປ ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສິ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບ ເອີຣົບ 6 ເດືອນທ້າຍປີ ປັບຕົວເພີ່ມຂຶ້ນຢ່າງຄຶກຄັກເມື່ອທຽບກັບ 6 ເດືອນຕົ້ນປີທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ອາຊຽນ ຕະຫຼາດຫຼັກຊັບ ຍີ່ປຸ່ນ (NIKKEI225) ປັບຕົວເພີ່ມຂຶ້ນ 20,26%, ສປ.ຈີນ (SHENZHEN) 5,62%, ຮ່ອງກົງ (HANG SENG) 5,52%, ສິງກະໂປ (STRAIT TIMES) 4%, ອິນໂດເນເຊຍ (JCI) 4,77%, ໄທ (SET) 5,43%, ອົດສະຕາລີ (S&P/ASX200) 6,43%, ສ.ເກົາຫຼີ (KOSPI) 2,79%, ໄຕ້ຫວັນ (TWSE) 5,98%, ສສ. ຫວຽດນາມ (HOCHIMIN) 6,2%ແລະ ສປ.ຈີນ (SHANGHAI) 8,99%, ສ່ວນ (ASEAN 40) ປັບຕົວຫຼຸດລົງ -3,05%, ກຳປູເຈຍ (CSX) -11,08%, ມາເລເຊຍ (FBMLCI) -0,49%, ຟີລິບປິນ (PCOMP) -13,92%, ສສ. ຫວຽດນາມ (HANOI) -5,03% ແລະ ມຽນມ້າ (MYANPIX) -28,85. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ສ່ວນໃຫ່ຍປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກການປັບຕົວເພີ່ມຂຶ້ນຂອງລາຄານ້ຳມັນໂລກ ພາຍຫຼັງຈາກທີ່ກອງປະຊຸມກຸ່ມຜູ້ຜະລິດນ້ຳມັນໂລກສາມາດຫາຂໍ້ຕົກລົງກັນໄດ້ໃນການຄວບຄຸມປະລິມານການຜະລິດນ້ຳມັນ ເພື່ອສະກັດກັ້ນບັນຫາອຸປະທານນ້ຳມັນລົ້ນຕະຫຼາດ ເຊິ່ງເປັນສາເຫດຫຼັກທີ່ເຮັດໃຫ້ລາຄານ້ຳມັນຕົກຢ່າງຮຸນແຮງ ປະກອບກັບ ຜູ້ວ່າການ ທະນາຄານກາງຍີ່ປຸ່ນ ຫຼື BOJ ໄດ້ອອກມາສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນວ່າ BOJ ຈະປັບນະໂຍບາຍການເງິນຫາກມີຄວາມຈຳເປັນ ແລະ ລວມທັງຈະດາເນີນນະໂຍບາຍກະຕຸ້ນເສດຖະກິດເສີມ ດ້ວຍວິທີການຊື້ຊັບສິນ ຫຼື ການປັບອັດຕາດອກເບ້ຍໄລຍະສັ້ນລົງອີກ ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ລົງທຶນ ແລະ ຜົນສຳຫຼວດລ່າສຸດທີ່ເຮັດໂດຍ ສຳນັກງານ ຄະນະລັດຖະ ມົນຕີ ຍີ່ປຸ່ນ ໄດ້ລະບຸວ່າ ຄວາມເຊື່ອໝັ້ນຂອງປະຊາຊົນຍີ່ປຸ່ນທີ່ປະກອບທຸລະກິດທີ່ມີຄວາມອ່ອນໄຫວຕໍ່ເສດຖະກິດຂອງປະເທດແມ່ນມີການປັບຕົວເພີ່ມຂຶ້ນສູງກວ່າລະດັບ 50 ເຊິ່ງຢູ່ໃນລະດັບຄວາມເຊື່ອໝັ້ນທາງແງ່ບວກ ແລະ ເປັນການປັບຕົວສູງກວ່າທີ່ເຄີຍສຳຫຼວດໃນເດືອນ ທັນວາ ປີກ່ອນ ເຊັ່ນດຽວກັນກັບ ມູນຄ່າການສັ່ງຊື້ເຄື່ອງຈັກໃນເດືອນ ຕຸລາ ກໍ່ປັບຕົວເພີ່ມຂຶ້ນ 4,1% ເມື່ອທຽບເປັນລາຍເດືອນ ໄດ້ກາຍເປັນການສົ່ງສັນຍານບວກ ເຖິງທ່າອ່ຽງຂອງການປັບຕົວເພີ່ມຂຶ້ນຂອງເສດຖະກິດຂອງປະເທດຍີ່ປຸ່ນ ປະກອບກັບ ການລາຍງານລ່າສຸດຂອງ ສປ ຈີນ ທີ່ມີການເປີດເຜີຍວ່າ GDP ໄຕມາດ 3 ແມ່ນຢູ່ທີ່ລະດັບ 6,7% ເຊິ່ງກົງກັບເປົ້າໝາຍຂອງລັດຖະບານ ສປ. ຈີນ ທີ່ໄດ້ວາງໄວ້ ໃນຂະນະທີ່ ສະຖານະການການດຳເນີນມາດຕະການກະຕຸ້ນເສດຖະກິດຂອງ ECB ທີ່ໄດ້ປະກາດລ່າສຸດ ກໍ່ໄດ້ກາຍເປັນປັດໃຈບວກໃຫ້ແກ່ຜູ້ລົງທຶນໃນຕະຫຼາດຫຼັກຊັບອາຊີ ເຊັ່ນກັນ ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສິ່ງຜົນໃຫ້ ດັດຊະນີຕະຫຼາດຫຼັກຊັບ ອາຊີ ສ່ວນໃຫ່ຍປັບຕົວເພີ່ມຂຶ້ນ ເມື່ອທຽບກັບຊ່ວງ 6 ເດືອນຕົ້ນປີທີ່ຜ່ານມາ.

## 2. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນ 6 ເດືອນທ້າຍປີ ປິດຢູ່ທີ່ 1.012,72 ຈຸດ ຫຼຸດລົງ 10,17% ເມື່ອທຽບໃສ່ 6 ເດືອນທີ່ຜ່ານມາ, ຕະຫຼອດ 6 ເດືອນ ມີປະລິມານຊື້-ຂາຍຮຸ້ນທັງໝົດ 12,51 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 62,09 ຕື້ກີບ ເພີ່ມຂຶ້ນ 22,26% ທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 56,54% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.818 ກີບ ເພີ່ມຂຶ້ນ 410 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 597.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,87 ຕື້ກີບ ຫຼຸດລົງ 76,40% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 33,71% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,41%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.987 ກີບ ຫຼຸດລົງ 876 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 11,81 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 58,92 ຕື້ກີບ ເພີ່ມຂຶ້ນ 64,94% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງ ປະເທດສະເລ່ຍ ກວມເອົາ 61,22% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[2].

ຮຸ້ນຂອງບໍລິສັດລາວເວິນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 5.614 ກີບ ຫຼຸດລົງ 965 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 8.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 47,72 ລ້ານກີບ ເພີ່ມຂຶ້ນ 398,18% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,79%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.541 ກີບ ຫຼຸດລົງ 209 ກີບ, ມີປະລິມານຊື້-ຂາຍທັງໝົດ 81.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 205,85 ລ້ານກີບ ຫຼຸດລົງ 88,78% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 49,41% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4]

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.094 ກີບ ຫຼຸດລົງ 232 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 13.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 42,08 ລ້ານກີບ ຫຼຸດລົງ 95,91% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ໂດຍເປັນການຊື້-ຂາຍຂອງ ຜູ່ລົງທຶນຕ່າງປະເທດ ກວມເອົາ 34,56% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນ 4,22%[5].

**ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄຳ

---

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

## ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

(ເດືອນ ກໍລະກົດ - ທັນວາ 2016)

| | 6 ເດືອນ ຕົ້ນປີ 2016 | | | 6 ເດືອນ ທ້າຍປີ 2016 | | | % ການປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ(ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະເລຍ (ກີບ) | ຈຳນວນ(ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະເລຍ(ກີບ) | ຈຳນວນ | ມູນຄ່າການຊື້ຂາຍ | ລາຄາສະເລຍ |
| BCEL | 2.765.830 | 12.192.657.300 | 4.408 | 597.200 | 2.877.370.000 | 4.818 | -78,41 | -76,40 | 410 |
| EDL-GEN | 6.092.606 | 35.721.326.950 | 5.863 | 11.815.600 | 58.920.430.000 | 4.987 | 93,93 | 64,94 | -876 |
| LWPC | 1.456 | 9.578.800 | 6.579 | 8.500 | 47.720.000 | 5.614 | 483,79 | 398,18 | -965 |
| PTL | 667.149 | 1.834.939.200 | 2.750 | 81.000 | 205.850.000 | 2.541 | -87,86 | -88,78 | -209 |
| SVN | 309.656 | 1.029.960.400 | 3.326 | 13.600 | 42.080.000 | 3.094 | -95,61 | -95,91 | -232 |
| **ທັງໝົດ** | 9.836.697 | 50.788.462.650 | | 12.515.900 | 62.093.450.000 | | 27,24 | 22,26 | |

## ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ

(ວັນທີ 11 ມັງກອນ - 22 ທັນວາ 2016)




## ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

(ເດືອນ ມັງກອນ - ມິຖຸນາ 2016)



**ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ**

| ຊື່ດັດສະນີ | ປະເທດ | ດັດຊະນີ6ເດືອນທ້າຍປີ | ດັດຊະນີ6ເດືອນຕົ້ນປີ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 19.941,96 | 17.829,73 | 2.112,23 | 11,85 |
| NASDAQ | ສ.ອາເມລິກາ | 5.471,43 | 4.843,76 | 627,67 | 12,96 |
| S&P500 | ສ.ອາເມລິກາ | 2.265,18 | 2.088,9 | 176,28 | 8,44 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.426,37 | 1.336,1 | 90,27 | 6,76 |
| DAX | ເຢຍລະມັນ | 11.468,64 | 10.015,54 | 1.453,1 | 14,51 |
| FTSE100 | ອັງກິດ | 7.041,42 | 6.226,55 | 814,87 | 13,09 |
| CAC40 | ຝຣັ່ງ | 4.833,82 | 4.367,24 | 466,58 | 10,68 |
| LUXXX | ລຸກຊໍາບວກ | 1.685,816 | 1.461,809 | 224,007 | 15,32 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 19.444,49 | 16.169,11 | 3.275,38 | 20,26 |
| KOSPI | ສ.ເກົາຫຼີ | 2.037,96 | 1.982,70 | 55,26 | 2,79 |
| HANGSHENG | ຮ່ອງກົງ | 21.809,80 | 20.668,44 | 1.141,36 | 5,52 |
| TWSE | ໄຕ້ຫວັນ | 9.204,26 | 8.684,85 | 519,41 | 5,98 |
| SHANGHAI | ສປ. ຈີນ | 3.137,43 | 2.878,56 | 258,87 | 8,99 |
| SHENZHEN | ສປ. ຈີນ | 1.996,03 | 1.889,71 | 106,319 | 5,62 |
| S&P/ASX200 | ອົດສະຕາລີ | 5.613,50 | 5.274,40 | 339,1 | 6,43 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 8.734,07 | 9.008,63 | -274,56 | -3,05 |
| STRAIT TIME | ສິງກະໂປ | 2.901,70 | 2.789,45 | 112,25 | 4,02 |
| SET | ໄທ | 1.508,57 | 1.430,8 | 77,77 | 5,43 |
| FBMLCI | ມາເລເຊຍ | 1.629,59 | 1.637,69 | -8,1 | -0,49 |
| JCI | ອິນໂດເນເຊຍ | 5.111,39 | 4.878,71 | 232,68 | 4,77 |
| PCOMP | ຟີລິບປິນ | 6.686,36 | 7.767,23 | -1.080,9 | -13,92 |
| HOCHIMIN | ສສ. ຫວຽດນາມ | 666,94 | 628 | 38,94 | 6,20 |
| HANOI | ສສ. ຫວຽດນາມ | 80,25 | 84,5 | -4,25 | -5,03 |
| CSX | ກໍາປູເຈຍ | 330,19 | 371,35 | -41,16 | -11,08 |
| LSX | ສປປ. ລາວ | 1.005,2 | 1.128,83 | -123,63 | -10,95 |
| MYANPIX | ມຽນມ້າ | 620,87 | 872,67 | -251,8 | -28,85 |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 3.869,99 | 2.770,42 | 1.099,57 | 39,69 |
| SET BANK | ໄທ | 482,88 | 456,02 | 26,86 | 5,89 |